# ຄວາມຊ່ວຍເຫລືອ
# ຈາກພຣະເຈົ້າ



"ຄວາມຊ່ອຍເຫລືອຈາກພຣະເຈົ້າ" ເປັນປຶ້ມນ້ອຍໆເພື່ອທ່ານຈະຖືຕິດຕົວໄປນຳໄດ້ ແລະກໍໃຊ້ເປັນປໂຍດໃນຂນະທີ່ທ່ານກຳລັງລໍຖ້າຜູ້ໃດຜູ້ນຶ່ງຫລືລໍຖ້າຣົດໂດຍສານຢູ່. ເວລາວ່າງທີ່ທ່ານມີຢູ່ນັ້ນອາດໃຊ້ເປັນກຳໄລແກ່ວິນຍານຈິດຂອງທ່ານຢ່າງມີຄ່າທີ່ສຸດ.

ອັກສອນໃນປຶ້ມນີ້ເປັນຕົວພິມໃຫຍ່ແລະກໍອ່ານງ່າຍ ສ່ວນຫົວຂໍ້ເຣື່ອງກໍເລືອກມາຈາກພຣະຄັມພີຫລາຍຕອນ ເພາະວ່າໃນພຣະຄັມພີມີຄຳອະທິບາຍທີ່ດີທີ່ສຸດ. ການທີ່ເຮົານຳເອົາຂໍ້ຄວາມມາປະສານກັນ ຈະຊ່ອຍໃຫ້ເຮົາເຂົ້າໃຈຂ່າວປະເສີດຂອງພຣະເຈົ້າ ດີຂຶ້ນ ເພາະພຣະເຈົ້າຊົງປະທານພຣະຄັມຂອງພຣະອົງແກ່ເຮົາ.

ພຣະຄັມຂອງພຣະເຈົ້າມາຈາກ "ເບື້ອງເທິງ" ແລະຊ່ອຍຢ່າງເຕັມສ່ວນແກ່ຈິດໃຈທີ່ຫິວກະຫາຍຄວາມຊອບທັມ. ເມື່ອຜູ້ໃດຜູ້ນຶ່ງກັບໃຈໃຫມ່ ຮັບສາຣະພາບຄວາມຜິດບາບ ແລະຍອມຮັບພຣະເຢຊູຄຣິດພຣະຜູ້ໂຜດໃຫ້ພົ້ນ ດ້ວຍສຸດຈິດສຸດໃຈ ພຣະຜູ້ເປັນເຈົ້າຈະຊົງປະທານຄວາມຊົມຊື່ນຍິນດີແລະຄວາມສັນຕິສຸກ ໃຫ້ແກ່ຈິດໃຈຂອງຜູ້ນັ້ນ.

ສ່ວນຂ້າພະເຈົ້າເອງ ຂ້າພະເຈົ້າໄດ້ຮັບປະສົບປະການນີ້ໃນປີ ຄ.ສ. ໑໙໓໗ ແລະຕັ້ງແຕ່ນັ້ນມາຂ້າພະເຈົ້າກໍບໍ່ໄດ້ເຄີຍທຳລາຍມິດຕະພາບອັນອັສຈັນກັບພຣະຜູ້ເປັນເຈົ້ານີ້ເລີຍ.

ຖ້າທ່ານຍັງບໍ່ທັນຍອມຮັບເອົາພຣະອົງ ຂ້າພະເຈົ້າຢາກຈະຂໍເຊີນທ່ານຍອມມອບຖວາຍຈິດໃຈຕໍ່ພຣະອົງດຽວນີ້ສາ.

ວັຕສັນ ກູດແມນ

# ຄວາມຮັກຂອງພຣະເຈົ້າ

ພຣະນິມິດ ໑:໕,໖

ພຣະເຢຊູຄຣິດຜູ້ຊົງເປັນພະຍານທີ່ສັດຊື່ ແລະຊົງເປັນຜູ້ແຣກທີ່ໄດ້ຄືນມາຈາກຄວາມຕາຍ ກັບທັງຊົງຄອບຄອງກະສັດທັງຫລາຍໃນໂລກ ພຣະອົງຊົງຮັກເຮົາທັງຫລາຍ ແລະໄດ້ຊົງປົດປ່ອຍພວກເຮົາຈາກການຜິດບາບ ດ້ວຍພຣະໂລຫິດຂອງພຣະອົງ ພຣະອົງຊົງຕັ້ງເຮົາທັງຫລາຍໄວ້ໃຫ້ເປັນອານາຈັກ ແລະເປັນປະໂຣຫິດຂອງພຣະອົງ ພຣະກຽດແລະພຣະອານຸພາບຈົ່ງມີແດ່ພຣະອົງສືບໆໄປເປັນນິດ.

ໂຢຮັນ ໓:໑໖

ພຣະເຈົ້າຊົງຮັກໂລກ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍແຕ່ມີຊີວິດອັນຕລອດໄປເປັນນິດ.

ໂຣມ ໕:໘

ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍ ຄືຂນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ.

# ການເປັນພຣະເຈົ້າຂອງພຣະເຢຊູຄຣິດ

ມັດທາຍ ໑:໒໒,໒໓

ພຣະຜູ້ເປັນເຈົ້າໄດ້ຊົງກ່າວໄວ້ດ້ວຍຜູ້ປະກາດພຣະທັມວ່າ "ເບິງ ແມ ຍິງພົມມຈາຣີນັ້ນຈະມີທ້ອງແລະຈະປະສູດບຸດຄົນນຶ່ງ ແລະເຂົາຈະ ເອີ້ນຊື່ບຸດນັ້ນວ່າ ເອມານູເອນ ແປວ່າພຣະເຈົ້າຊົງສະຖິດຢູ່ກັບເຮົາ ທັງຫລາຍ."

ໂຢຮັນ ໑:໑ ແລະ ໑໔

ເມືອຕົ້ນເດີມນັ້ນພຣະທັມຊົງເປັນຢູ່ແລ້ວ ພຣະທັມນັ້ນຊົງສະຖິດ ຢູ່ກັບພຣະເຈົ້າ ພຣະທັມນັ້ນແຫລະຊົງເປັນພຣະເຈົ້າ ພຣະທັມໄດ້ ຊົງບັງເກີດເປັນມະນຸດແລະຊົງອາສັຍຢູ່ຖ້າມກາງເຮົາທັງຫລາຍ ບໍຣິ ບູນດ້ວຍພຣະຄຸນແລະຄວາມຈິງ ເຮົາທັງຫລາຍໄດ້ເຫັນສະງ່າຣາສີ ຂອງພຣະອົງ ຄືສະງ່າຣາສີອັນສົມກັບພຣະບຸດອົງດຽວຂອງພຣະບິດາ.

໑ ຕີໂມທຽວ ໓:໑໖

ເຮົາຕ້ອງຍອມຮັບວ່າ ຂໍ້ເລິກລັບແຫ່ງສາສນາຂອງເຮົານັ້ນກໍໃຫຍ່ ຫລາຍ ຄືວ່າພຣະອົງຊົງຜາກົດມີສະພາບຂອງມະນຸດ ພຣະວິນຍານ ໄດ້ຊົງປະກາດວ່າຊົງເປັນຜູ້ຊອບທັມ ຝູງເທວະດາກໍໄດ້ເຫັນ ມີຜູ້ປະ ກາດພຣະອົງແກ່ພວກຕ່າງຊາດ ມີຊາວໂລກໄດ້ເຊືອຖືພຣະອົງ ພຣະ ອົງຊົງຖືກຮັບຂຶ້ນເມືອສູ່ພຣະຣັສມີ.

# ພຣະເຢຊູຊົງເປັນພຣະບຸດ
# ຂອງພຣະເຈົ້າ

ລູກາ ໑:໓໕

ເທວະດາໄດ້ຕອບນາງວ່າ "ພຣະວິນຍານບໍຣິສຸດຈະສະເດັດລົງມາເຖິງເຈົ້າ ແລະຣິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້ ເຫດສັນນັ້ນ ບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າ ບໍຣິສຸດ ຄືພຣະບຸດຂອງພຣະເຈົ້າ."

ໂກໂລຊາຍ ໒:໙

ໃນພຣະອົງນັ້ນ(ພຣະເຢຊູຄຣິດ) ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະກາຍຢ່າງເຕັມບໍຣິບູນ.

ເອຊາຢາ ໙:໖

ເດັກນ້ອຍຜູ້ນຶ່ງໄດ້ເກີດມາໃຫ້ເຮົາແລ້ວ ຊົງປະທານລູກຊາຍຜູ້ນຶ່ງໃຫ້ເຮົາ ແລະພຣະອົງຈະຊົງເປັນຜູ້ປົກຄອງຂອງເຮົາ ພຣະນາມຂອງພຣະອົງຄື "ຜູ້ປຶກສາທີ່ສລາດສັຽມແຫລມ ພຣະເຈົ້າຜູ້ຊົງຣິດອົງເປັນພຣະບິດາຕລອດໄປ ອົງສັນຕິລາດ."

# ພຣະເຢຊູຊົງບອກໃຫ້ເຮົາຮູ້ວ່າ ພຣະອົງຊົງເປັນໃຜແທ້

ໂຢຮັນ ໘:໕໘

ພຣະເຢຊູຊົງຕອບເຂົາວ່າ "ເຮົາບອກພວກທ່ານຕາມຄວາມຈິງ ວ່າ ກ່ອນອັບຣາຮາມເກີດ ເຮົານີ້ກໍເປັນຢູ່ແລ້ວ."

ໂຢຮັນ ໘:໒໓

ພຣະອົງຊົງກ່າວຕໍ່ເຂົາວ່າ "ທ່ານທັງຫລາຍເປັນຂອງເບື້ອງລຸ່ມ ຝ່າຍເຮົາເປັນຂອງເບື້ອງເທິງ ພວກທ່ານເປັນຝ່າຍໂລກນີ້ ເຮົາບໍ່ເປັນຝ່າຍໂລກນີ້."

ໂຢຮັນ ໑໑:໒໕

ພຣະເຢຊູຊົງກ່າວຕໍ່ນາງວ່າ "ເຮົານີ້ແຫລະເປັນເຫດໃຫ້ຄືນທັງປວງເປັນຄືນມາທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອຢູ່ໃນເຮົາເຖິງແມ່ນວ່າຕາຍໄປແລ້ວກໍຍັງມີຊີວິດຢູ່."

# ການອັດສະຈັນບາງປະການ
# ທີ່ພຣະເຢຊູຊົງກະທຳ

ມັດທາຍ ໑໔:໑໓-໒໑

ແລ້ວພຣະອົງຊົງສັ່ງໃຫ້ປະຊາຊົນນັ່ງລົງຕາມປ່າຫຍ້າ ເມື່ອຊົງຮັບເອົາເຂົ້າຈີ່ຫ້າກ້ອນແລະປາສອງໂຕແລ້ວກໍຊົງເງີຍພຣະພັກເບິ່ງຟ້າແລະຂໍພຣະພອນ ເມື່ອຊົງຫັກເຈົ້າຈີ່ແລ້ວກໍຍື່ນໃຫ້ພວກສາວົກ ພວກສາວົກກໍແຈກໃຫ້ຄົນທັງປວງ ເຂົາໄດ້ກິນອີ່ມທຸກຄົນ ສ່ວນຕ່ອນຫັກທີ່ເຫລືອນັ້ນ ເຂົາເກັບໄດ້ເຕັມສິບສອງບຸງ ຝ່າຍຄົນທີ່ກິນນັ້ນມີຜູ້ຊາຍປະມານຫ້າພັນຄົນ ບໍ່ນັບແມ່ຍິງແລະເດັກນ້ອຍ.

ມັດທາຍ ໒໐:໓໐ ແລະ ໓໔

ແລະເບິ່ງແມ ມີຄົນຕາບອດສອງຄົນນັ່ງຢູ່ແຄມທາງ ເມື່ອໄດ້ຍິນວ່າພຣະເຢຊູສະເດັດກາຍມາ ເຂົາຈຶ່ງຮ້ອງຂຶ້ນວ່າ"ທ່ານຜູ້ເປັນບຸດດາວິດເອີຍ ຂໍຈົ່ງເມດຕາພວກຂ້ານ້ອຍແດ່ທ້ອນ" ພຣະເຢຊູຊົງມີພຣະທັຍຄິດສົງສານຈຶ່ງບາຍຕາຂອງເຂົາ ໃນທັນໃດນັ້ນເຂົາກໍເຫັນຮຸ່ງ ຈຶ່ງໄດ້ຕາມພຣະອົງໄປ.

# ພຣະເຢຊູຄຣິດຊົງເປັນຜູ້ສ້າງແລະເປັນ ອົງພຣະຜູ້ເປັນເຈົ້າ

ໂກໂລຊາຍ ໑:໑໖

**ໃນພຣະອົງ ພຣະເຈົ້າໄດ້ຊົງສ້າງສັພສິ່ງຂຶ້ນທັງໃນຟ້າແລະເທິງ** ແຜ່ນດິນໂລກ ສິ່ງທີ່ຕາເຫັນໄດ້ແລະສິ່ງທີ່ຕາເຫັນບໍ່ໄດ້ ຈະເປັນພຣະທີ່ນັ່ງແລະເປັນອະນຸພາບ ເປັນອົງຜູ້ປົກຄອງຫລືຜູ້ມີອຳນາດ ສິ່ງທັງປວງເຫລົ່ານີ້ ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະອົງແລະສຳລັບພຣະອົງ.

ເຮັບເຣີ ໑:໒

ໃນຄາວສຸດທ້າຍນີ້ ພຣະອົງໄດ້ຊົງກ່າວແກ່ເຮົາທັງຫລາຍທາງພຣະບຸດ ຜູ້ເຊິ່ງພຣະອົງໄດ້ຊົງຕັ້ງໃຫ້ເປັນຜູ້ມີສັພສິ່ງທັງປວງເປັນມໍຣະດົກ ແລະດ້ວຍພຣະບຸດນັ້ນພຣະອົງໄດ້ຊົງສ້າງໂລກທັງຫລາຍ.

ໂຣມ ໑໔:໙

ເພາະເຫດນີ້ແຫລະ ພຣະຄຣິດຈຶ່ງໄດ້ສິ້ນພຣະຊົນແລະໄດ້ຊົງຄືນພຣະຊົນອີກ ເພື່ອຈະໄດ້ຊົງເປັນອົງພຣະຜູ້ເປັນເຈົ້າຂອງຄົນຕາຍແລະຂອງຄົນເປັນ.

# ພຣະເຢຊູຄຣິດຈະພິພາກສາທຸກຄົນ

ໂຣມ ໑໔:໑໐

ຕົວເຈົ້າເດ ເຫດໃດເຈົ້າຈຶ່ງກ່າວໂທດໃສ່ພີ່ນ້ອງຂອງຕົນ ຫລື ເຈົ້າຜູ້ເປັນອີກຝ່າຍນຶ່ງ ເຫດໃດເຈົ້າຈຶ່ງມິ່ນປມາດພີ່ນ້ອງຂອງຕົນ ດ້ວຍວ່າເຮົາທຸກຄົນຕ້ອງຢືນຢູ່ຫນ້າບັນລັງພິພາກສາຂອງພຣະເຈົ້າ.

໒ ຕີໂມທຽວ ໔:໑

ເຮົາສັ່ງເຈົ້າຕໍ່ພຣະພັກພຣະເຈົ້າແລະຕໍ່ພຣະພັກພຣະເຢຊູຄຣິດ ຜູ້ຊຶ່ງຈະພິພາກສາທັງຄົນເປັນແລະຄົນຕາຍ ໂດຍອ້າງເຖິງການທີ່ ພຣະອົງຈະຊົງສ່ອງສວ່າງມາຜາກົດ ແລະອ້າງເຖິງຣາຊອານາຈັກ ຂອງພຣະອົງ.

ກິຈການ ໑໐:໔໒

ພຣະອົງຊົງສັ່ງໃຫ້ຂ້າພະເຈົ້າທັງຫລາຍ ປະກາດແກ່ພົລເມືອງ ແລະເປັນພະຍານວ່າ ແມ່ນພຣະອົງນີ້ແຫລະທີ່ພຣະເຈົ້າໄດ້ຊົງຕັ້ງ ໄວ້ໃຫ້ເປັນຜູ້ພິພາກສາທັງຄົນເປັນແລະຄົນຕາຍ.

ໂຢຮັນ ໕:໒໒

ພຣະບິດາບໍ່ໄດ້ຊົງພິພາກສາຜູ້ໃດ ແຕ່ພຣະອົງໄດ້ຊົງມອບການ ພິພາກສາທັງສິ້ນໄວ້ກັບພຣະບຸດ.

# ການໃຖ່ບາບມີມາໂດຍທາງ ພຣະເຢຊູຄຣິດເທົ່ານັ້ນ

ໂຢຮັນ ໘:໒໔

"ດ້ວຍເຫດນີ້ ເຮົາຈຶ່ງບອກທ່ານທັງຫລາຍວ່າ ພວກທ່ານຈະຕາຍໃນຄວາມຜິດບາບຂອງທ່ານ ເພາະວ່າຖ້າທ່ານບໍ່ເຊື່ອວ່າເຮົານີ້ແຫລະເປັນຜູ້ນັ້ນ ພວກທ່ານຈະຕ້ອງຕາຍໃນບາບຂອງ**ຕົນ** ."

ໂຢຮັນ ໔:໖

ພຣະເຢຊູຊົງຕອບລາວວ່າ "ເຮົານີ້ແຫລະ ເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ ນອກຈາກຈະມາທາງເຮົາ."

ກິຈການ ໔:໑໘

ໃນຜູ້ອື່ນຄວາມລອດພົ້ນຈະບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າທີ່ຊົງປະທານແກ່ມະນຸດ ເພື່ອໃຫ້**ເຮົາ**ທັງຫລາຍຕ້ອງໄດ້ພົ້ນ.

ລູກາ ໑໙:໑໐

ບຸດມະນຸດໄດ້ມາເພື່ອຈະຊອກຫາ ແລະໂຜດເອົາຜູ້ທີ່ຫລົງເສັຽໄປແລ້ວນັ້ນໃຫ້ລອດພົ້ນ.

# ການໄຖ່ບາບມີມາໂດຍທາງ
# ພຣະເຢຊູຄຣິດເທົ່ານັ້ນ (ຕໍ່)

ໂກໂລຊາຍ ໑:໑໔-໑໔

ຈົ່ງຂອບພຣະຄຸນພຣະບິດາ ຜູ້ຊົງບັນດານໃຫ້ເຈົ້າທັງຫລາຍສົມກັບທີ່ຈະເຂົ້າສ່ວນ ໄດ້ຮັບມໍຣະດົກດ້ວຍກັນກັບພວກໄພ່ພົນໃນຄວາມສວ່າງ ພຣະອົງໄດ້ຊົງໂຜດດຶງເຮົາທັງຫລາຍໃຫ້ພົ້ນຈາກອຳນາດຂອງຄວາມມືດ ແລະໄດ້ຊົງຍົກຍ້າຍພວກເຮົາໄປຕັ້ງໄວ້ໃນຣາຊອານາຈັກແຫ່ງພຣະບຸດທີ່ຮັກຂອງພຣະອົງນັ້ນ ເຮົາທັງຫລາຍຈຶ່ງໄດ້ຮັບການໄຖ່ໃຫ້ພົ້ນ ຄືຊົງໂຜດຍົກຜິດບາບທັງຫລາຍຂອງພວກເຮົາ.

ເຮັບເຣີ ໕:໙

ເມື່ອພຣະເຈົ້າໄດ້ຊົງບັນດານ ໃຫ້ພຣະບຸດເຖິງທີ່ສຳເຣັດແລ້ວພຣະບຸດນັ້ນ ຈຶ່ງໄດ້ເກີດເປັນຕົ້ນກຳເນີດແຫ່ງຄວາມລອດພົ້ນ ອັນຕລອດໄປເປັນນິດແກ່ຄົນທັງປວງທີ່ເຊື່ອຟັງພຣະອົງ.

ເຮັບເຣີ ໗:໒໕

ດ້ວຍເຫດນີ້ ພຣະອົງຈຶ່ງຊົງສາມາດເປັນນິດທີ່ຈະໂຜດເອົາຄົນທັງປວງ ທີ່ໄດ້ເຂົ້າມາຫາພຣະເຈົ້າໂດຍທາງພຣະອົງນັ້ນ ໃຫ້ໄດ້ຮັບຄວາມລອດພົ້ນ ເພາະວ່າພຣະອົງຊົງພຣະຊົນຢູ່ເປັນນິດ ເພື່ອຊ່ອຍທູນຂໍພຣະກະຣຸນາໃຫ້ຄົນເຫລົ່ານັ້ນ.

# ພຣະໂລຫິດຂອງພຣະເຢຊູໄດ້ຊົງ ຊໍາຣະລ້າງເຮົາ

໑ ໂຢຮັນ ໑:໗

ຖ້າເຮົາທັງຫລາຍດໍາເນີນຊີວິດຢູ່ໃນຄວາມສວ່າງ ເຫມືອນຢ່າງພຣະອົງຊົງສະຖິດຢູ່ໃນຄວາມສວ່າງ ພວກເຮົາກໍຮ່ວມສາມັກຄີທັມເຊິ່ງກັນແລະກັນ ແລະພຣະໂລຫິດຂອງພຣະເຢຊູພຣະບຸດຂອງພຣະອົງ ກໍຊໍາຣະລ້າງເຮົາທັງຫລາຍຈາກຜິດບາບຫມົດສິ້ນ.

໑ ເປໂຕ ໑:໑໘,໑໙

ທ່ານທັງຫລາຍຮູ້ແລ້ວວ່າ ພຣະອົງຊົງໄຖ່ພວກທ່ານອອກຈາກການດໍາເນີນຊີວິດອັນບໍ່ມີປໂຍດ ເຊິ່ງພວກທ່ານໄດ້ຮັບຈາກບັນພະບຸຣຸດຂອງພວກທ່ານ ບໍ່ແມ່ນໄຖ່ດ້ວຍສິ່ງຂອງທີ່ເສື່ອມສູນໄປ ຄືເງິນຫລືຄໍາ ແຕ່ຊົງໄຖ່ດ້ວຍພຣະໂລຫິດອັນຊົງມີຄ່າຂອງພຣະຄຣິດ ເຫມືອນດັ່ງເລືອດລູກແກະທີ່ບໍ່ມີຕໍາຫນິຫລືຮອຍດ່າງ.

ເອເຟໂຊ ໑:໗

ໃນພຣະເຢຊູນັ້ນ ພວກ**ເຮົາໄດ້ຮັບ**ການໄຖ່ໃຫ້ພົ້ນ ດ້ວຍພຣະໂລຫິດຂອງພຣະອົງ ຄືໄດ້ຮັບການອະພັຍການຫລົງຜິດຂອງເຮົາ ໂດຍພຣະກະຣຸນາອັນຊຸດົມຂອງພຣະເຈົ້າ.

# ຄວາມລອດພົ້ນຈາກບາບມີໂດຍ ຄວາມເຊື່ອໃນພຣະເຢຊູຄຣິດ

ໂຢຮັນ ໒໐:໓໑

ທີ່ໄດ້ຈົດເຫດການເຫລົ່ານີ້ໄວ້ ກໍເພື່ອທ່ານທັງຫລາຍຈະໄດ້ເຊື່ອວ່າພຣະເຢຊູຊົງເປັນພຣະຄຣິດພຣະບຸດຂອງພຣະເຈົ້າ ເມື່ອມີຄວາມເຊື່ອແລ້ວ ທ່ານກໍຈະມີຊີວິດໂດຍພຣະນາມຂອງພຣະອົງ.

ໂຣມ ໕:໑

ເມື່ອເຮົາທັງຫລາຍໄດ້ຊົງຖືວ່າເປັນຄົນຊອບທັມ ເພາະຄວາມເຊື່ອແລ້ວ ພວກເຮົາຈຶ່ງມີສັນຕິສຸກກັບພຣະເຈົ້າໂດຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ.

ເອເຟໂຊ ໒:໘,໙

ເຊິ່ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງແຕ່ພຣະເຈົ້າຊົງປະທານໃຫ້ ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້.

# ພຣະເມດຕາກະຣຸນາຂອງພຣະເຈົ້າ

ເພງສັນລະເສີນ ໑໐໓:໑໗

ຄວາມຮັກພຣະຜູ້ເປັນເຈົ້າ ຈຶງມີແດ່ຜູ້ທີ່ຖວາຍກຽດແດ່ພຣະອົງ ຕລອດໄປ ແລະຄວາມຊອບທັມຂອງພຣະອົງຈຶງຫມັ້ນຄົງ **ຢູ່ທຸກຊົວອາຍຸຄົນ**

ເພງໂອ່ຍຄາງ ໓:໒໒,໒໓

ຄວາມຮັກອັນບໍ່ເຫລວໄຫລຂອງພຣະຜູ້ເປັນເຈົ້າ ແລະຄວາມເມດຕາກະຣຸນາຂອງພຣະອົງຈຶງມີຢູ່ຕລອດໄປ ເຊິງສົດໃສເຫມືອນດັ່ງຕອນເຊົ້າແລະແນ່ນອນເຫມືອນດັ່ງຕາເວັນຂຶ້ນ.

ເພງສັນລະເສີນ ໑໐໓:໑໑

ຟ້າສວັນສູງເຫນືອແຜ່ນດິນໂລກຫລາຍເທົ່າໃດ ຄວາມຮັກທີ່ພຣະອົງຈຶງມີແກ່ຜູ້ທີ່ຢຳເກງພຣະອົງກໍສູງຫລາຍເທົ່ານັ້ນ.

ເພງສັນລະເສີນ ໑໐໘:໔

ຄວາມຮັກອັນຫມັ້ນຄົງຂອງພຣະອົງຈຶງສູງເຖິງທ້ອງຟ້າ ແລະຄວາມສັດຊື່ສຸດຈະຣິດຈຶງຈຸທ້ອງຟ້າ.

# ພຣະເຈົ້າຊົງເຊີນໃຫ້ເຮົາມາຫາພຣະອົງ

ເອຊາຢາ ໑:໑໘

ພຣະຜູ້ເປັນເຈົ້າຊົງກ່າວວ່າ"ໃຫ້ພວກເຮົາມາເວົ້າກັນເທາະ ຄືເຖິງແມ່ນບາບຂອງເຈົ້າຈະເປັນສີແດງ ເຮົາກໍຈະລ້າງໃຫ້ຂາວ ສະອາດເຫມືອນນວນຝ້າຍ ແລະເຖິງມັນຈະແດງເຂັ້ມເຮົາກໍຈະ ເຮັດໃຫ້ຂາວເຫມືອນຂົນແກະ."

ມັດທາຍ ໑໑:໒໘

"ບັນດາຜູ້ທີ່ເຮັດການຫນັກຫນ່ວງແລະແບກພາຣະຫນັກ ຈົ່ງມາຫາເຮົາ ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ."

ໂຢຮັນ ໗:໓໗

ໃນວັນສຸດທ້າຍຂອງງານເທສການເຊິ່ງເປັນວັນໃຫຍ່ນັ້ນພຣະ ເຢຊູຊົງຢືນແລະຮ້ອງຂຶ້ນວ່າ "ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງມາຫາເຮົາ ແລະດື່ມ."

ເອຊາຢາ ໕໕:໑

ພຣະຜູ້ເປັນເຈົ້າຊົງກ່າວວ່າ "ທຸກຄົນທີ່ຢາກນ້ຳ ເຊີນມາເຖີດ ນ້ຳມີຢູ່ທີ່ນີ້ ຜູ້ທີ່ບໍ່ມີເງິນໃຊ້ ເຊີນມາເຖີດ ມາຊື້ເຂົ້າກິນສາ ເຊີນມາຊື້ເຫລົ້າອະງຸ່ນແລະນ້ຳນົມກິນ ເຈົ້າບໍ່ຕ້ອງເສັຽຄ່າຫຍັງດອກ."

# ບໍ່ແມ່ນມະນຸດທຸກຄົນທີ່ເປັນລູກ ຂອງພຣະເຈົ້າ

ໂຢຮັນ ໑:໑໘

ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ.

ໂຣມ ໘:໑໔,໑໕

ພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ ຜູ້ນັ້ນແຫລະເປັນບຸດຂອງພຣະເຈົ້າ ເຫດວ່າເຈົ້າທັງຫລາຍບໍ່ໄດ້ຮັບວິນຍານທີ່ໃຫ້ມີນິສັຍຢ່າງຂ້ອຍຂ້າ ເຊິ່ງນຳເຖິງຄວາມຢ້ານກົວອີກ ແຕ່ພວກເຈົ້າໄດ້ຮັບພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງພຣະເຈົ້າ ທີ່ໃຫ້ເຮົາທັງຫລາຍຮ້ອງເອີ້ນພຣະເຈົ້າວ່າ"ອັບບາ" ຄື ພຣະບິດາ.

໑ ໂຢຮັນ ໓:໑໐

ດັ່ງນີ້ແຫລະ ຈຶ່ງເຫັນໄດ້ວ່າຜູ້ໃດເປັນລູກຂອງພຣະເຈົ້າ ແລະຜູ້ໃດເປັນລູກຂອງມານ ຄືວ່າຜູ້ໃດທີ່ບໍ່ໄດ້ເຮັດຄວາມທ່ຽງທັມຫລືບໍ່ຮັກພີ່ນ້ອງຂອງຕົນ ຜູ້ນັ້ນກໍບໍ່ໄດ້ມາຈາກພຣະເຈົ້າ.

# ພຣະເຈົ້າຊົງສອນກ່ຽວກັບ ການດື່ມເຫລົ້າ

ສຸພາສິດ ໒໓:໓໑,໓໒

ຢ່າຄິດສະອອນເຫລົ້າອະງຸ່ນເລີຍ ເພາະວ່າເຖິງແມ່ນມັນຈະງາມໃນເວລາເຈົ້າສື່ນ ແລະເປັນສີແດງໃສສະອາດ ຈົນສ່ອງເຫັນເງົາກໍຕາມ ແຕ່ເມື່ອເຈົ້າດື່ມແລ້ວ ສຸດທ້າຍເຈົ້າກໍຈະຮູ້ສຶກເຈັບເຫມືອນຖືກງູພິດຕອດ.

ເອຊາຢາ ໕:໑໑

ວິບາກແກ່ຄົນທັງຫລາຍທີ່ລຸກແຕ່ເຊົ້າໄປຫາກິນ **ເຫລົ້າອະງຸ່ນ ແລະໃຊ້ເວລາຢູ່ເດິກດື່ນເພື່ອກິນເຫລົ້າອະງຸ່ນຈົນເມົາ.**

ຄາລາເຕັຽ ໕:໑໙-໒໑

ການງານຂອງມະນຸດທັມມະດານັ້ນກໍພາກົດແຈ້ງແລ້ວຄື ການຫລິ້ນຊູ້ ການບໍ່ສະອາດ ການໂລພະຕັນຫາ ການໄຫວ້ພຣະທຽມ ການເຊື່ອເວດມົນຄາຖາ ການເປັນສັດຕູກັນ ການວິວາດຜິດຖຽງກັນ ການຄຽດແຄ້ນກັນ ການໄຝ່ສູງຕໍ່ກັນ ການແຕກແຍກກັນ ການຖືພັກຖືພວກ ການອິດສາກັນ ການເສບສຸຣາຢາເມົາ ການກິນລ້ຽງຢ່າງຊົ່ວຊ້າ ແລະການອື່ນໆໃນທຳນອງນີ້ອີກ ເຮົາຂໍເຕືອນເຈົ້າທັງຫລາຍເຫມືອນກັບທີ່ເຮົາໄດ້ເຕືອນພວກເຈົ້າລ່ວງຫນ້າແລ້ວວ່າ ຄົນທີ່ເຄີຍເຮັດການຢ່າງນັ້ນ ຈະບໍ່ມີສ່ວນໃນຣາຊອານາຈັກ ຂອງພຣະເຈົ້າ.

# ຄວາມສັດຊື່ສຸດຈະຣິດເທົ່ານັ້ນ ບໍ່ເປັນການພຽງພໍ

ມາຣະໂກ ໑໐:໑໗-໒໒

ເມືອພຣະອົງສະເດັດອອກໄປກາງທາງ ມີຄົນນຶງແລ່ນມາຫາພຣະອົງ ຄຸເຂົ່າລົງທູນຖາມພຣະອົງວ່າ "ພຣະອາຈານ ຜູ້ປະເສີດເອີຍ ຂ້ານ້ອຍຈະຕ້ອງເຮັດແນວໃດ ຈຶງຈະໄດ້ຮັບຊີວິດອັນຕລອດໄປເປັນນິດມາເປັນມໍຣະດົກ" ພຣະເຢຊູຊົງຕອບວ່າ "ເປັນຫຍັງທ່ານຈຶງເອີ້ນເຮົາວ່າ ຜູ້ປະເສີດ ບໍ່ມີໃຜປະເສີດເວັ້ນໄວ້ແຕ່ພຣະເຈົ້າອົງດຽວເທົ່ານັ້ນ ທ່ານຮູ້ຈັກຂໍ້ບັນຍັດແລ້ວວ່າ ຢ່າຂ້າຄົນ ຢ່າມິດສາຈານຈາກຜົວຈາກເມັຽ ຢ່າລັກຊັບ ຢ່າເປັນພະຍານບໍ່ຈິງ ຢ່າສໍ້ໂກງ ຈົ່ງນັບຖືບິດາມານດາຂອງຕົນ." ຄົນນັ້ນໄດ້ທູນຕອບວ່າ "ອາຈານເອີຍ ຂໍ້ເຫລົ່ານັ້ນ ຂ້ານ້ອຍໄດ້ຮັກສາໄວ້ຕັ້ງແຕ່ເປັນເດັກນ້ອຍມາ." ພຣະເຢຊູເພ່ງເບິງຜູ້ນັ້ນ ກໍຊົງຮັກເພິນແລ້ວຊົງກ່າວວ່າ "ທ່ານຍັງຂາດຢູ່ສິງນຶງ ຄືຈົ່ງໄປຂາຍບັນດາສິງຂອງເຊິງທ່ານມີຢູ່ແຈກທານແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສວັນ ແລະຈົ່ງຕາມເຮົາມາເສັຽ." ເມືອໄດ້ຍິນຄຳນັ້ນ ຫນ້າຂອງເພິນກໍເສົ້າລົງ ຄົນນັ້ນກໍອອກໄປເປັນທຸກຫນັກໃຈ ເພາະຕົນມີຊັບສິງຂອງຈຳນວນຫລາຍ.

# ຢ່າໃຫ້ຄົນອື່ນລໍ້ລວງທ່ານ

໑ ໂກຣິນໂທ ໖:໙,໑໐

ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ຄົນອະທັມຈະບໍ່ມີສ່ວນໃນຣາຊອານາຈັກຂອງພຣະເຈົ້າ ຢ່າເຂົ້າໃຈຜິດວ່າ ຄົນຫລິ້ນຊູ້ກໍດີ ຫລືຄົນຂາບໄຫວ້ພຣະທຽມ ຄົນຜິດຈາກຜົວເມັຽກັນ ຊາຍຫລິ້ນຄືຍິງ ຊາຍຫລິ້ນກັບຊາຍ ຄົນຂະໂມຍ ຄົນໂລບ ຄົນຂີ້ເຫລົ້າ ຄົນເວົ້າຫຍາບຊ້າ ຄົນຂົ່ມຂູ່ກໍດີ ຈະບໍ່ໄດ້ຮັບສ່ວນໃນຣາຊອານາຈັກຂອງພຣະເຈົ້າ.

໑ ໂຢຮັນ ໓:໗,໘

ລູກນ້ອຍທັງຫລາຍເອີຍ ຢ່າໃຫ້ຜູ້ໃດຊັກຈູງພວກເຈົ້າໃຫ້ຫລົງ ຜູ້ທີ່ເຮັດຕາມຄວາມທ່ຽງທັມ ກໍເປັນຜູ້ທ່ຽງທັມເຫມືອນພຣະຄຣິດຊົງທ່ຽງທັມ ຜູ້ທີ່ເຮັດບາບຕາມເຄີຍກໍມາຈາກມານ ເພາະວ່າມານໄດ້ເຮັດບາບຕັ້ງແຕ່ເດີມມາ.

ເອເຟໂຊ ໕:໖

ຢ່າໃຫ້ຜູ້ໃດລໍ້ລວງພວກທ່ານດ້ວຍຄຳເວົ້າອັນໄຮ້ປໂຍດ ເພາະການເຮັດເຫລົ່ານີ້ແຫລະ ພຣະພິໂຣດຂອງພຣະເຈົ້າ ຈຶ່ງຕົກໃສ່ຄົນທັງຫລາຍທີ່**ບໍ່ຍອມເຊື່ອຟັງ**.

# ຄວາມຜິດບາບນໍາໄປສູ່ຄວາມຕາຍ

ໂຣມ ໕:໑໘

ຄວາມຜິດບາບໄດ້ເຂົ້າມາໃນໂລກ ເພາະດ້ວຍມະນຸດຄົນດຽວ ແລະຄວາມຕາຍກໍໄດ້ເກີດມາ ຍ້ອນຄວາມຜິດບາບນັ້ນ ຢ່າງນັ້ນ ແຫລະ ຄວາມຕາຍຈຶ່ງໄດ້ລາມໄປເຖິງມະນຸດທຸກຄົນ ເພາະວ່າທຸກ ຄົນໄດ້ເຮັດບາບແລ້ວ.

ຢາໂກໂບ ໑:໑໕

ເມື່ອກິເລດຕັ້ງຮາກແລ້ວກໍໃຫ້ເກີດຄວາມຜິດບາບ ແລະເມື່ອ ຄວາມຜິດບາບຄົບຖ້ວນແລ້ວ ກໍໃຫ້ເກີດຄວາມຕາຍ.

ລູກາ ໑໕:໓໒

ສົມຄວນທີ່ພີ່ຕ້ອງມີຄວາມຊົມຊື່ນຍິນດີ ເພາະນ້ອງຂອງເຈົ້າຄົນ ນີ້ຕາຍແລ້ວ ແຕ່ມັນໄດ້ກັບຄືນມາອີກ ມັນເສັຽແລ້ວແຕ່ຍັງໄດ້ພົບ ອີກ.

ສຸພາສິດ ໑໑:໑໙

ຜູ້ໃດທີ່ຕັ້ງຫມັ້ນຢູ່ໃນຄວາມຊອບທັມກໍຈະມີຊີວິດ ແລະຜູ້ໃດທີ່ຕິດ ຕາມຄວາມຊົ່ວກໍຈະເຖິງແກ່ຄວາມຕາຍ.

# ພຣະຄຣິດຊົງຊະນະຄວາມຕາຍ

ລູກາ ໗:໑໔,໑໕

ແລ້ວພຣະອົງສະເດັດເຂົ້າໄປໄກ້ບາຍໂລງ ພວກຫາມສົບນັ້ນ ກໍຢຸດຢືນຢູ່ ພຣະອົງຈຶ່ງສັ່ງວ່າ"ຊາຍຫນຸ່ມເອີຍ ເຮົາສັ່ງເຈົ້າວ່າ ຈົ່ງລຸກຂຶ້ນ" ແລ້ວຄົນທີ່ຕາຍນັ້ນກໍລຸກຂຶ້ນນັ່ງຕັ້ງຕົ້ນເວົ້າ...

ພຣະນິມິດ ໑:໑໘

ເຮົາເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມເຮົາກໍມີ ຊີວິດຢູ່ຕລອດເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະ ແຫ່ງມໍຣະນາ.

ໂຢຮັນ ໑໑:໔໓,໔໔

ເມືອຊົງກ່າວຢ່າງນັ້ນແລ້ວ ພຣະອົງຊົງເປັ່ງພຣະສຸຣະສຽງ ວ່າ"ລາຊະໂລເອີຍ,ຈົ່ງອອກມາເສັຽ." ຜູ້ຕາຍນັ້ນກໍໄດ້ອອກມາ ມີຜ້າພັນຕີນແລະມືແລະມີຜ້າປົກຫນ້າໄວ້ ແລ້ວພຣະເຢຊູຈຶ່ງຊົງ ບອກເຂົາວ່າ"ຈົ່ງແກ້ປ່ອຍໃຫ້ລາວໄປເສັຽ."

# ຂໍ້ບັນຍັດສິບປະການ

## ພຣະທັມອົບພະຍົບ ໒໐:໒–໑໗

ພວກເຈົ້າຢ່າມີພຣະອື່ນ ນອກຈາກເຮົາ.

ພວກເຈົ້າຢ່າເຮັດຮູບໂຄຣົບສຳລັບຕົນ ຫລືຮູບສິ່ງນຶ່ງສິ່ງໃດທີ່ມີຢູ່ໃນສວັນຊັ້ນຟ້າ ໃນແຜ່ນດິນ ຫລືໃນນ້ຳລຸ່ມແຜ່ນດິນ ຢ່າຂາບໄຫວ້ຮູບເຫລົ່ານັ້ນ...

ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າ ໄປໃນທາງທີ່ຜິດ ເພາະວ່າ ເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງຜິດ.

ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກມື້ ແຕ່ມື້ຖ້ອນເຈັດໃຫ້ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ.

ຈົ່ງນັບຖືບິດາມາດາຂອງເຈົ້າ ເພື່ອເຈົ້າຈະມີອາຍຸຫມັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງເຈົ້າໄດ້ມອບໃຫ້.

ພວກເຈົ້າຢ່າຂ້າຄົນ.

ຢ່າລ່ວງເກີນຜົວເມັຽຜູ້ອື່ນ.

ຢ່າລັກຊັບ.

ຢ່າເປັນພະຍານເທດໃສ່ຮ້າຍເພື່ອນບ້ານຂອງຕົນ.

ຢ່າອິດສາຢາກໄດ້ເຮືອນ ຢ່າອິດສາຢາກໄດ້ຜົວຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ.

# ທ່ານບໍ່ອາດລີ້ຕົວຈາກພຣະເຈົ້າໄດ້

ເຢເຣມີຢາ ໒໓:໒໔

ພຣະຜູ້ເປັນເຈົ້າຊົງກ່າວວ່າ "ທ່ານຮູ້ບໍວ່າ ເຮົາສະຖິດຢູ່ໃນທຸກທີ່ທຸກບ່ອນ ບໍ່ວ່າໃນສວັນຊັ້ນຟ້າຫລືໃນໂລກກໍດີ.

ສຸພາສິດ ໑໕:໓

ພຣະຜູ້ເປັນເຈົ້າຊົງເຫັນທຸກສິ່ງໃນທຸກໆບ່ອນ ພຣະອົງຊົງເຫັນທັງຜູ້ເຮັດດີແລະຜູ້ເຮັດຊົ່ວ.

ເພງສັນລະເສີນ ໑໓໙:໘,໑໒

ຖ້າວ່າຂ້ານ້ອຍຂຶ້ນໄປເຖິງສວັນຊັ້ນຟ້າ ພຣະອົງກໍຢູ່ທີ່ນັ້ນ ຖ້າວ່າຂ້ານ້ອຍລົງໄປໃນພິພົບຄົນຕາຍ ພຣະອົງກໍຢູ່ທີ່ນັ້ນ ແຕ່ວ່າຄວາມມືດນັ້ນ ບໍ່ໄດ້ມືດສຳລັບພຣະອົງ ແລະກາງຄືນກໍແຈ້ງເໝືອນກາງວັນ ຄວາມມືດແລະຄວາມສວ່າງກໍເປັນຢ່າງດຽວກັນສຳລັບພຣະອົງ.

# ການພິພາກສາລົງໂທດຕລອດໄປ ແກ່ຄົນອະທັມ

ມັດທາຍ ໒໕:໔໖

"ແລ້ວພວກເຫລົ່ານີ້ຈະອອກໄປສູ່ໂທດອັນຕລອດໄປເປັນນິດ ແຕ່ພວກສິລທັມຈະເຂົ້າສູ່ຊີວິດອັນຕລອດໄປເປັນນິດ."

໒ ເປໂຕ ໓:໗

ໂດຍພຣະທັມອັນດຽວກັນນັ້ນແຫລະ ຟ້າແລະດິນທີ່ມີຢູ່ໃນປັດຈຸບັນນີ້ ກໍຊົງຮັກສາໄວ້ສຳລັບໃຫ້ໄຟເຜົາຜານເສັຽ ຄືຊົງຮັກສາໄວ້ຈົນກວ່າຈະເຖິງວັນທີ່ບັນດາມະນຸດເຊີ່ງບໍ່ນັບຖືພຣະເຈົ້າຈະຖືກຊົງພິພາກສາແລະຈິບຫາຍໄປ.

ມັດທາຍ ໑໓:໔໑,໔໒

ບຸດມະນຸດຈະໃຊ້ພວກເທວະດາຂອງເພິ່ນອອກໄປ ເຂົາຈະເກັບກວາດທຸກສີ່ງທີ່ເຮັດໃຫ້ຫລົງຜິດກັບບັນດາຜູ້ທີ່ເຮັດຊົ່ວ ອອກໄປຈາກຣາຊແຜ່ນດິນຂອງເພິ່ນ ແລ້ວຈະເອົາໄປຖິ້ມໃສ່ເຕົາໄຟຮ້ອນກ້າ ທີ່ນັ້ນຈະມີການຮ້ອງໄຫ້ກັດແຂ້ວຄັຽວຟັນ.

# ວັນພິພາກສາ

ໂຣມ ໑໔:໑໒

ເຮົາທຸກຄົນຈະຕ້ອງກາບທູນເຣື່ອງຣາວຂອງຕົນເອງ ຕໍ່ພຣະເຈົ້າ.

໒ ໂກຣິນໂທ ໕:໑໐

ຈຳເປັນທີ່ເຮົາທຸກຄົນຈະຕ້ອງຜາກົດຕົວຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບສົມກັບການທີ່ຕົນໄດ້ເຮັດໃນຮ່າງກາຍນີ້ ແລ້ວແຕ່ຈະດີຫລືຊົ່ວ.

໑ ໂຢຮັນ ໔:໑໗

ໃນຂໍ້ນີ້ແຫລະ, ຄວາມຮັກເປັນທີ່ສຳເຣັດໃນເຮົາທັງຫລາຍ ເພື່ອວ່າພວກເຮົາຈະໄດ້ມີຄວາມແນ່ໃຈໃນວັນພິພາກສາ ເພາະພຣະຄຣິດຊົງເປັນຢ່າງໃດ ເຮົາທັງຫລາຍໃນໂລກກໍເປັນດັ່ງນັ້ນ.

ເຮັບເຣີ ໙:໒໗

ມະນຸດຖືກຊົງກຳນົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະ ຫລັງຈາກນັ້ນຈະມີການພິພາກສາ.

# ພຣະຄຸນຂອງພຣະເຢຊູ

໒ ໂກຣິນໂທ ໘:໙

ເຈົ້າທັງຫລາຍຮູ້ຈັກພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາແລ້ວວ່າ ເຖິງແມ່ນພຣະອົງຊົງຮັ່ງມີ ພຣະອົງກໍຍັງຊົງຍອມກາຍເປັນຄົນຍາກຈົນເພາະເຫັນແກ່ເຈົ້າທັງຫລາຍ ເພື່ອເຈົ້າທັງຫລາຍຈະໄດ້ກາຍເປັນຄົນຮັ່ງມີ ເນື່ອງຈາກຄວາມຍາກຈົນຂອງພຣະອົງ.

ໂຣມ ໕:໑໕

ຂອງປະທານທີ່ມາດ້ວຍພຣະຄຸນນັ້ນບໍ່ເຫມືອນຢ່າງການລະເມີດ ເພາະຖ້າຄົນຈຳນວນຫລາຍຕ້ອງຕາຍ ເພາະການລະເມີດຂອງມະນຸດຄົນດຽວ ຫລາຍກວ່ານັ້ນອີກ ພຣະຄຸນຂອງພຣະເຈົ້າແລະຂອງປະທານທີ່ມາດ້ວຍພຣະຄຸນຂອງພຣະອົງຜູ້ດຽວຄືພຣະເຢຊູຄຣິດ ກໍມີບໍຣິບູນແກ່ຄົນຈຳນວນຫລາຍດ້ວຍ.

ກິຈການ ໔:໓໓

**ຝ່າຍພວກອັຄສາວົກ**ກໍເຕັມໄປດ້ວຍຣິດເດດອັນໃຫຍ່ແລະເປັນພະຍານວ່າ ພຣະເຢຊູເຈົ້າໄດ້ຊົງຄືນພຣະຊົນແລ້ວ ແລະພຣະຄຸນອັນໃຫຍ່ໄດ້ຢູ່ກັບເຂົາທຸກຄົນ.

# *ການປ່ຽນໃຈໃຫມ່*

ເອເຊກຽນ ໑໘:໓໑

ຈົ່ງຫລີກຈາກການທຳຊົ່ວທັງປວງ ໃຫ້ປ່ຽນຄວາມຄິດແລະຈິດໃຈໃຫມ່ເສັຽ  ໂອ ອິສຣາເອນເອີຍ ຫລືວ່າພວກເຈົ້າຢາກຕາຍຊັ້ນບໍ?

ກິຈການ ໓:໑໙

ທ່ານທັງຫລາຍຈົ່ງຖິ້ມໃຈເກົ່າແລ້ວຫລົບລ່າວຕ່າວຄືນ ເພື່ອພຣະເຈົ້າຈະຊົງລົບລ້າງຄວາມຜິດບາບຂອງພວກທ່ານເສັຽ.

໒ ໂກຣິນໂທ ໗:໑໐

ຄວາມທຸກໃຈຕາມຢ່າງຊອບພຣະທັຍພຣະເຈົ້ານັ້ນ ຍ່ອມເຮັດໃຫ້ກັບໃຈເສັຽໃຫມ່ເຊິ່ງນຳພາໄປສູ່ຄວາມພົ້ນໂດຍບໍ່ຄອນກິນແຫນງ ແຕ່ຄວາມທຸກໃຈຕາມຢ່າງໂລກນັ້ນ ຍ່ອມນຳໄປເຖິງຄວາມຕາຍ.

ກິຈການ ໑໗:໓໐

ໃນສມັຍທີ່ມະນຸດຍັງໂງ່ບໍ່ຮູ້ຈັກພຣະເຈົ້າ  ພຣະອົງກໍບໍ່ຊົງຖືໂທດ ແຕ່ບັດນີ້ ພຣະອົງຊົງສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນ ໃຫ້ຖິ້ມໃຈເກົ່າເອົາໃຈໃຫມ່.

# ການຍົກໂທດຄວາມຜິດບາບ

ມາຣະໂກ ໒:໕

ເມື່ອພຣະເຢຊູຊົງເຫັນຄວາມເຊື່ອຂອງເຂົາ ກໍຊົງກ່າວແກ່ຄົນເປັ້ຽນັ້ນວ່າ "ລູກເອີຍ ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ."

ມັດທາຍ ๖:໑໔

ຖ້າທ່ານຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານຜູ້ຊົງສະຖິດໃນສວັນ ຈະຊົງໂຜດຍົກຄວາມຜິດຂອງທ່ານດ້ວຍ.

ເອຊາຢາ ໕໕:໗

...ຊົງໃຫ້ຄົນອະທັມໜີຈາກທາງດຳເນີນຊີວິດຂອງເຂົາ ແລະຊົງປ່ຽນແນວທາງຄິດຂອງເຂົາ ຊົງໃຫ້ເຂົາກັບຄືນມາຫາພຣະຜູ້ເປັນເຈົ້າຂອງເຮົາ ພຣະອົງຊົງເຕັມໄປດ້ວຍຄວາມເມດຕາແລະຊົງໃຫ້ອະພັຍໄວ.

ເອເຊກຽນ ໑໘:໒໑

ຖ້າຄົນຊົ່ວຫລີກຈາກການເຮັດບາບແລະປະພຶດຕາມພຣະທັມຂອງເຮົາ ເຮັດແຕ່ສິ່ງທີ່ດີແລະຊອບທັມ ລາວກໍຈະບໍ່ຕາຍ ແຕ່ຈະມີຊີວິດຢ່າງແນ່ນອນ.

# ການແຍກຕົວອອກຈາກຄວາມຊົ່ວ ຝ່າຍໂລກ

ເອເຟໂຊ ໕:໑໑

ຢ່າເຂົ້າສ່ວນກັບກິຈການຂອງຄວາມມືດທີ່ບໍ່ມີປໂຍດ ແຕ່ຈົ່ງເປີດເຜີຍກິຈການນັ້ນໃຫ້ພາກົດດີກວ່າ.

ເອຊາຢາ ໑:**໑໕-໑໖**

ມືຂອງເຈົ້າເປິະເປື້ອນດ້ວຍເລືອດ ຈົ່ງຊຳຣະລ້າງຕົວເຈົ້າໃຫ້ສະອາດ ໃຫ້ຢຸດການກະທຳຊົ່ວຮ້າຍທີ່ເຮົາເຫັນຢູ່ນັ້ນເສັຽ.

ໂກໂລຊາຍ ໓:໒

ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງບໍ່ໃຊ່ສິ່ງເຊິ່ງຢູ່ທີ່ແຜ່ນດິນໂລກ.

ຕິໂຕ ໒:໑໑-໑໒

ພຣະຄຸນຂອງພຣະເຈົ້າໄດ້ສ່ອງມາພາກົດແລ້ວ ເພື່ອນຳເອົາຄວາມພົ້ນມາໃຫ້ຄົນທັງປວງແລະສອນເຮົາທັງຫລາຍໃຫ້ລະຖິ້ມຄວາມຊົ່ວຄວາມອະທັມ ແລະກິເລດຕັນຫາຝ່າຍໂລກ ແລະໃຫ້ດຳເນີນຊີວິດຢູ່ໃນສມັຍນີ້ຢ່າງມີສະຕິອັນດີຮອບຄອບ ດ້ວຍຍຸຕິທັມ ແລະນັບຖືພຣະເຈົ້າຢ່າງຖືກຕ້ອງ.

# ການບັງເກີດໃຫມ່

ໂຢຮັນ ๓:๓

ພຣະເຢຊູຊົງຕອບວ່າ "ເຮົາບອກທ່ານຕາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດມາໃຫມ່ ຜູ້ນັ້ນຈະເຫັນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້."

໑ ເປໂຕ ໑:໒໓

ທ່ານທັງ**ຫລາຍ**ໄດ້ເກີດໃຫມ່ແລ້ວ ບໍ່ແມ່ນເກີດຈາກແນວປູກທີ່ອາດເປື່ອຍເນົ່າ ແຕ່ເກີດຈາກແນວປູກທີ່ບໍ່ອາດເປື່ອຍເນົ່າ ຄືເກີດຈາກພຣະທັມຂອງພຣະເຈົ້າອັນຊົງມີຊີວິດແລະຕັ້ງຫມັ້ນຄົງ.

໑ ໂຢຮັນ ๕:໑໘

ເຮົາທັງຫລາຍຮູ້ແລ້ວວ່າ ຄົນທີ່ເກີດຈາກພຣະເຈົ້າກໍບໍ່ເຮັດບາບຕາມເຄີຍ ແຕ່ພຣະອົງຜູ້ຊົງບັງເກີດແຕ່ພຣະເຈົ້າກໍຊົງຮັກສາຄົນນັ້ນ ແລະມານຮ້າຍບໍ່ຈັບຕ້ອງຄົນນັ້ນ.

໒ ໂກຣິນໂທ ๕:໑໗

ຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າຫລືສິ່ງເກົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ ກາຍເປັນສິ່ງໃຫມ່ທັງສິ້ນ.

ເອເຊກຽນ ๓໖:໒໖

ເຮົາຈະໃຫ້ຈິດໃຈໃຫມ່ແກ່ເຈົ້າ ຈະເອົາຈິດວິນຍານອັນໃຫມ່ມາໃສ່ໄວ້ພາຍໃນເຈົ້າ ເຮົາຈະຖອດເອົາໃຈແຂງເຫມືອນຫີນອອກຈາກເນື້ອກາຍຂອງເຈົ້າ ແລະຈະໃຫ້ເຈົ້າມີໃຈຄົນ.

# ຕາຍໄປແລ້ວໃນຄວາມຜິດບາບ
# ຄືນຂຶ້ນມາໃນພຣະຄຣິດ

ເອເຟໂຊ ໒:໑,໕

ພຣະເຈົ້າໄດ້ຊົງບັນດານໃຫ້ທ່ານທັງຫລາຍຄືນມີຊີວິດເຫມືອນກັນເຖິງແມ່ນວ່າ ທ່ານທັງຫລາຍຕາຍແລ້ວໂດຍການຫລົງຜິດ ແລະເຮັດບາບ...ແລະໄດ້ຊົງບັນດານໃຫ້ເຮົາເປັນຄືນມາດ້ວຍກັນກັບພຣະອົງ ແລະຊົງໂຜດໃຫ້ເຮົານັ່ງໃນສວັນສະຖານດ້ວຍກັນກັບພຣະເຢຊູຄຣິດ.

ໂຣມ ໖:໒,໑໑

ພວກເຮົາຜູ້ຕາຍຕໍ່ຄວາມຜິດບາບແລ້ວ ຈະດຳເນີນຊີວິດຢູ່ໃນຄວາມຜິດບາບໄດ້ຢ່າງໃດ... ເຫມືອນກັນນັ້ນແຫລະເຈົ້າທັງຫລາຍຈົ່ງຖືວ່າ ພວກເຈົ້າໄດ້ຕາຍຕໍ່ຄວາມຜິດບາບແລ້ວ ແລະມີຊີວິດເພື່ອພຣະເຈົ້າໃນພຣະເຢຊູຄຣິດ.

໑ ເປໂຕ ໒:໒໔

ໃນພຣະກາຍຂອງພຣະອົງເອງ ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາໄປເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສັຽຝ່າຍການບາບແລະມີຊີວິດຝ່າຍຄວາມຊອບທັມ ດ້ວຍບາດແຜຂອງພຣະອົງ ທ່ານທັງຫລາຍກໍດີປົກກະຕິແລ້ວ.

# ຊີວິດອັນຕລອດໄປເປັນນິດ

ໂຢຮັນ ๓:๓๖

ຜູ້ທີ່ວາງໃຈໃນພຣະບຸດກໍມີຊີວິດອັນຕລອດໄປເປັນນິດ ຜູ້ທີ່ບໍ່ເຊື່ອຟັງພຣະບຸດກໍບໍ່ໄດ້ເຫັນຊີວິດ ແຕ່ພຣະພິໂຣດຂອງພຣະເຈົ້າປົກຄຸມຢູ່ເທິງຜູ້ນັ້ນ.

ໂຢຮັນ ๑๗:๓

ນີ້ແຫລະ ແມ່ນຊີວິດອັນຕລອດໄປເປັນນິດ ຄືທີ່ເຂົາຮູ້ຈັກພຣະອົງຜູ້ຊົງເປັນພຣະເຈົ້າທ່ຽງແທ້ອົງດຽວ ແລະຮູ້ຈັກພຣະເຢຊູຄຣິດທີ່ພຣະອົງຊົງໃຊ້ມາ.

ໂຢຮັນ ๕:๒๔

ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄຳຂອງເຮົາແລະວາງໃຈໃນພຣະອົງຜູ້ຊົງໃຊ້ເຮົາມາ ຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດແລະບໍ່ເຂົ້າໃນການພິພາກສາ ແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ.

ໂຣມ ๖:๒๓

ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ.

# ການແນ່ໃຈໃນຄວາມພົ້ນ

໑ ໂຢຮັນ ໓:໑໘,໑໙

ລູກນ້ອຍທັງຫລາຍເອີຍ ຢ່າໃຫ້ເຮົາຮັກດ້ວຍຄວາມເວົ້າແລະດ້ວຍປາກເທົ່ານັ້ນ ແຕ່ຈົ່ງສະແດງຄວາມຮັກອັນແທ້ຈິງດ້ວຍການກະທຳ ດ້ວຍເຫດນີ້ແຫລະ ເຮົາທັງຫລາຍກໍຮູ້ແລ້ວວ່າ ພວກເຮົາຢູ່ຝ່າຍຄວາມຈິງ ພວກເຮົາຈຶ່ງມີຄວາມແນ່ໃຈຕໍ່ພຣະພັກພຣະອົງ.

ຄາລາເຕັຽ ໔:໖

ເພາະເຈົ້າທັງຫລາຍເປັນບຸດຂອງພຣະເຈົ້າແລ້ວ ພຣະອົງຈຶ່ງຊົງໃຊ້ພຣະວິນຍານແຫ່ງພຣະບຸດຂອງພຣະອົງ ເຂົ້າມາໃນໃຈຂອງພວກເຮົາ ແລ້ວຮ້ອງວ່າ "ອັບບາ" ຄື ພຣະບິດາ.

ໂຢຮັນ ໑໔:໒໑

ຜູ້ທີ່ມີຂໍ້ບັນຍັດຂອງເຮົາແລະຖືຂໍ້ບັນຍັດນັ້ນ ຜູ້ນັ້ນແຫລະເປັນຜູ້ທີ່ຮັກເຮົາ ແລ້ວຜູ້ທີ່ຮັກເຮົາ ພຣະບິດາຂອງເຮົາຈະຮັກຜູ້ນັ້ນ ແລະຝ່າຍເຮົາຈະຮັກຜູ້ນັ້ນ ພ້ອມທັງຈະສະແດງຕົວເຮົາໃຫ້ແກ່ຜູ້ນັ້ນ.

໑ ໂຢຮັນ ໔:໑໓

ດ້ວຍນີ້ແຫລະ ເຮົາທັງຫລາຍຈຶ່ງຮູ້ວ່າ ພວກເຮົາຢູ່ໃນພຣະອົງ ແລະພຣະອົງຊົງສະຖິດຢູ່ໃນພວກເຮົາ ເພາະພຣະອົງໄດ້ຊົງໂຜດປະທານພຣະວິນຍານຂອງພຣະອົງແກ່ພວກເຮົາ.

# ພຣະເຢຊູຊົງປະທານຄວາມຍິນດີ

ເພງສັນລະເສີນ ໑໖:໑໑

ພຣະອົງຊົງຊີ້ໃຫ້ຂ້ານ້ອຍເຫັນຫົນທາງເຊີ່ງນຳໄປສູ່ຊີວິດ ພຣະພັກຂອງພຣະອົງທຳໃຫ້ຂ້ານ້ອຍເຕັມໄປດ້ວຍຄວາມມ່ວນຊື່ນ ແລະຄວາມຊົດຊ່ອຍຂອງພຣະອົງກໍນຳຄວາມຍິນດີມາໃຫ້ຕລອດໄປ.

**ໂຢຮັນ ໑໖:໒໒**

**...ເຮົາຈະເຫັນພວກທ່ານອີກ ແລະໃຈຂອງພວກທ່ານຈະຊົມຊື່ນຍິນດີແລະບໍ່ມີຜູ້ໃດຈະເອົາຄວາມຍິນດີນັ້ນອອກໄປຈາກພວກທ່ານໄດ້.**

ໂຢຮັນ ໑໕:໑໑

ຂໍ້ຄວາມເຫລົ່ານີ້ເຮົາໄດ້ບອກທ່ານທັງຫລາຍແລ້ວ ເພື່ອຄວາມຍິນດີຂອງເຮົາຈະຢູ່ໃນທ່ານ ແລະຄວາມຍິນດີຂອງທ່ານຈະຄົບບໍຣິບູນ.

ໂຣມ ໑໔:໑໗

ຣາຊອານາຈັກຂອງພຣະເຈົ້າ ບໍ່ແມ່ນຫມາຍເຖິງການກິນແລະການດື່ມ ແຕ່ຫມາຍເຖິງຄວາມຊອບທັມແລະສັນຕິສຸກ ກັບຄວາມຊົມຊື່ນຍິນດີທີ່ມາຈາກພຣະວິນຍານບໍຣິສຸດ.

# ຈຳເປັນທີ່ເຮົາຕ້ອງເຊື່ອຟັງ
# ພຣະຜູ້ເປັນເຈົ້າ

ໂຣມ ໖:໑໖

ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ຖ້າພວກເຈົ້າເຄີຍມອບຕົວເຂົ້າຮັບໃຊ້ເຊື່ອຟັງຜູ້ໃດ ເຈົ້າກໍເປັນຂ້ອຍຂອງຜູ້ທີ່ເຈົ້າເຊື່ອຟັງນັ້ນ ຄືເປັນຂ້ອຍຂອງຄວາມຜິດບາບທີ່ນຳໄປສູ່ຄວາມຕາຍ ຫລືເປັນຂ້ອຍຂອງການເຊື່ອຟັງ **ຈົນໄດ້ຊົງຖືວ່າເປັນຄົນຊອບທັມກໍດີ.**

໒ ເທຊະໂລນິກ ໑:໗-໙

ແລະທີ່ຊົງໂຜດໃຫ້ເຈົ້າທັງຫລາຍ ຜູ້ຖືກຄວາມຍາກລຳບາກນັ້ນ ໄດ້ຮັບຄວາມບັນເທົາດ້ວຍກັນກັບພວກເຮົາ ເມື່ອເວລາພຣະເຢຊູເຈົ້າຈະຊົງຜາກົດຈາກຟ້າສວັນໃນແປວໄຟອັນຮ້ອນກ້າ ພ້ອມດ້ວຍເທວະດາຕົນມີຣິດຂອງພຣະອົງ ເພື່ອຈະລົງໂທດຕອບແທນຄົນທັງປວງທີ່ບໍ່ຮູ້ຈັກພຣະເຈົ້າ ແລະແກ່ຄົນທີ່ບໍ່ຍອມເຊື່ອຟັງຂ່າວປະເສີດເຣື່ອງພຣະເຢຊູເຈົ້າຂອງເຮົາທັງຫລາຍ ຄົນພວກນັ້ນຈະຖືກລົງໂທດ ຄືຄວາມວິນາດຈິບຫາຍເປັນນິດ ແລະແຍກຫ່າງຈາກພຣະພັກຂອງພຣະຜູ້ເປັນເຈົ້າ ແລະຈາກຣິດທານຸພາບອັນຮຸ່ງເຮືອງຂອງພຣະອົງ.

# ເຮົາຕ້ອງຮັບວ່າພຣະເຢຊູຊົງເປັນ ພຣະຄຣິດ

ມັດທາຍ ໑໐:໓໒,໓໓

ທຸກຄົນທີ່ຈະຮັບເຮົາຕໍ່ຫນ້າມະນຸດ ຝ່າຍເຮົາຈະຮັບຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນເຫມືອນກັນ ແຕ່ຜູ້ທີ່ປະຕິເສດເຮົາຕໍ່ຫນ້າມະນຸດ ຝ່າຍເຮົາກໍຈະປະຕິເສດຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນເຫມືອນກັນ.

໑ ໂຢຮັນ ໒:໒໓

ຜູ້ໃດທີ່ປະຕິເສດພຣະບຸດ ຜູ້ນັ້ນກໍບໍ່ມີພຣະບິດາ ຜູ້ໃດທີ່ຮັບຮູ້ພຣະບຸດ ຜູ້ນັ້ນກໍມີພຣະບິດາເຫມືອນກັນ.

ໂຣມ ໑໐:໙,໑໐

ຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນໃຈວ່າພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວ ເຈົ້າກໍຈະໄດ້ພົ້ນ ເຫດວ່າທີ່ມະນຸດໄດ້ເຊື່ອ ກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກ ຈຶ່ງຖືກຊົງໂຜດໃຫ້ພົ້ນ.

# ພຍາມານຄືສັດຕູຕົວສຳຄັນ

ມັດທາຍ ໔:໑,໑໐,໑໑

ພຣະວິນຍານໄດ້ຊົງພາພຣະເຢຊູເຂົ້າໄປໃນປ່າ ເພື່ອພຍາມານຈະໄດ້ທົດລອງພຣະອົງ... ພຣະເຢຊູຊົງຕອບມັນວ່າ "ອ້າຍຊາຕານເອີຍ ຈົ່ງໜີໄປເສັຽ ເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ "ຈົ່ງຂາບໄຫວ້ພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າ ແລະປະຕິບັດພຣະອົງຜູ້ດຽວ." ແລ້ວພຍາມານຈຶ່ງໜີຈາກພຣະອົງໄປ ແລະເບິ່ງແມ ມີພວກເທວະດາມາປະຕິບັດຮັບໃຊ້ພຣະອົງ.

ເອເຟໂຊ ໖:໑໑

ຈົ່ງສວມຍຸທະພັນຄົບຊຸດເຊິ່ງມາຈາກພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດຢືນຕໍ່ສູ້ກັບກົນອຸບາຍຂອງພຍາມານໄດ້.

໑ ເປໂຕ ໕:໘

ທ່ານທັງຫລາຍຈົ່ງຄອຍລະວັງຕົວແລະເຝົ້າຢູ່ ດ້ວຍວ່າສັດຕູຂອງທ່ານຄື ມານ ທຽວວົນວຽນໄປມາເໝືອນໂຕສິງ ທີ່ແຜດສຽງຊອກຫາຄົນທີ່ມັນຈະກັດກິນ.

# ການວັຍຊະນະເໜືອພຍາມານ

໑ ໂຢຮັນ ໓:໘

ຜູ້ທີ່ເຮັດບາບຕາມເຄີຍກໍມາຈາກມານ ເພາະວ່າມານໄດ້ເຮັດບາບຕັ້ງແຕ່ຕົ້ນເດີມມາ ພຣະບຸດຂອງພຣະເຈົ້າໄດ້ສະເດັດມາພາກົດກໍເພາະເຫດນັ້ນແຫລະ ຄືເພື່ອຊົງທຳລາຍກິຈການຂອງມານເສັຽ.

ເຮັບເຣີ ໒:໑໔

ເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພຣະອົງຈຶ່ງໄດ້ຊົງຮ່ວມຊາດມະນຸດເຫມືອນກັນ ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍ ຄື ພຍາມານ.

ຢາໂກໂບ ໔:໗,໘

ເຈົ້າທັງຫລາຍ ຈຶ່ງນ້ອມໃຈຍອມຟັງພຣະເຈົ້າ ຈຶ່ງຕໍ່ສູ້ກັບມານ ແລະມັນຈະຫນີຈາກພວກເຈົ້າໄປ ເຈົ້າທັງຫລາຍຈົ່ງເຂົ້າໃກ້ພຣະເຈົ້າ ແລະພຣະອົງຈະສະເດັດມາໃກ້ພວກເຈົ້າ ຄົນບາບທັງຫລາຍເອີຍ ຈົ່ງຊຳຣະມືໃຫ້ສະອາດ ແລະຄົນສອງໃຈຈົ່ງຊຳຣະໃຈຂອງຕົນໃຫ້ບໍຣິສຸດ.

# ຄວາມຮັກ - ການທົດສອບ
# ໃນການເປັນລູກສິດ

ໂຢຮັນ ໑໓:໓໕

ຖ້າເຈົ້າທັງຫລາຍມີຄວາມຮັກເຊິ່ງກັນແລະກັນ ດັ່ງນີ້ແຫລະ ຄົນທັງປວງກໍຈະໄດ້ຮູ້ວ່າ ເຈົ້າທັງຫລາຍເປັນສາວົກຂອງເຮົາ.

໑ ໂຢຮັນ ໓:໑໔

ຝ່າຍເຮົາທັງຫລາຍຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກຄວາມຕາຍເຂົ້າສູ່ຊີວິດແລ້ວ ກໍເພາະພວກເຮົາຮັກພີ່ນ້ອງ ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ.

ຄາລາເຕັຽ ໕:໒໒,໒໓

ຝ່າຍຜົນຂອງພຣະວິນຍານນັ້ນຄື ຄວາມຮັກ ຄວາມຍິນດີ ສັນຕິສຸກ ຄວາມອົດກັ້ນໄວ້ນານ ຄວາມປານີ ຄວາມດີ ຄວາມສັດຊື່ ຄວາມສຸພາບອ່ອນຫວານ ການຮູ້ບັງຄັບຕົນ ກົດຫມາຍທີ່ຫ້າມການຢ່າງນີ້ກໍບໍ່ມີ.

໑ ໂກລິນໂທ ໑໓:໑

ເຖິງແມ່ນວ່າເຮົາເວົ້າພາສາແປກໆໄດ້ ຈະເປັນພາສາມະນຸດຫລືພາສາເທວະດາກໍດີ ແຕ່ບໍ່ມີຄວາມຮັກ ເຮົາກໍເປັນເຫມືອນຄ້ອງຫລືແຊ່ງທີ່ສົ່ງສຽງດັງອຶກກະທຶກ.

# ການຟື້ນຄືນພຣະຊົນຂອງ
# ພຣະເຢຊູຄຣິດ

ກິຈການ ໑໐:໓໙-໔໑

ຝ່າຍຂ້າພະເຈົ້າທັງຫລາຍກໍເປັນພະຍານ ເຖິງການທັງປວງທີ່ພຣະອົງໄດ້ຊົງກະທຳໃນບ້ານເມືອງຂອງຊາວຢິວ ແລະໃນກຸງເຢຣູຊາເລັມ ພຣະອົງນັ້ນເຂົາໄດ້ຂ້າເສັຽດ້ວຍແຂວນໄວ້ທີ່ໄມ້ກາງແຂນ ພຣະອົງນັ້ນແຫລະ ພຣະເຈົ້າໄດ້ຊົງບັນດານໃຫ້ເປັນຄືນມາໃນວັນຖ້ວນສາມ ແລະຊົງບັນດານໃຫ້ພຣະອົງຜາກົດແຈ້ງ ບໍ່ໄດ້ຊົງໃຫ້ຜາກົດແກ່ພົລເມືອງທົ່ວໄປ ແຕ່ຊົງຜາກົດແກ່ພວກພະຍານເຊິ່ງພຣະເຈົ້າຊົງກຳນົດໄວ້ລ່ວງໜ້າ ຄືຊົງຜາກົດແກ່ພວກຂ້າພະເຈົ້າຜູ້ໄດ້ກິນແລະດື່ມດ້ວຍກັນກັບພຣະອົງ ພາຍຫລັງທີ່ພຣະອົງໄດ້ຄືນພຣະຊົນ.

ມາຣະໂກ ໑໖:໙

ຄັນຮຸ່ງເຊົ້າມື້ຕົ້ນສັປດາ ເມື່ອພຣະອົງຊົງເປັນຄືນມາແລ້ວ ພຣະອົງໄດ້ຊົງຜາກົດຕົນໃຫ້ນາງມາຣິອາ ໄທມັກດາລາ ເຫັນກ່ອນ ຄືມາຣິອາຄົນທີ່ພຣະອົງຊົງຂັບໄລ່ຜີອອກເຈັດໂຕນັ້ນ.

# ການຟື້ນຄືນພຣະຊົນ
# ເປັນຄວາມຫວັງອັນຍອດຢ້ຽມຂອງເຮົາ

ໂຣມ ໖:໓-໕

ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພວກເຮົາທຸກຄົນທີ່ໄດ້ຮັບບັບຕິສະມາເຂົ້າໃນພຣະເຢຊູຄຣິດ ກໍໄດ້ຮັບບັບຕິສະມາເຂົ້າໃນຄວາມຕາຍຂອງພຣະອົງ ເຫດສັນນັ້ນ ພວກເຮົາຈຶ່ງໄດ້ຖືກຝັງໄວ້ກັບພຣະອົງໂດຍການຮັບບັບຕິສະມາເຂົ້າສ່ວນໃນການສິ້ນພຣະຊົນນັ້ນ ເພື່ອວ່າພຣະຄຣິດໄດ້**ຖືກ**ບັນດານໃຫ້ຄືນພຣະຊົນ ໂດຍຣິດເດດອັນຮຸ່ງເຮືອງຂອງພຣະບິດາສັນໃດ ເຮົາທັງຫລາຍກໍຈະໄດ້ດຳເນີນຕາມຊີວິດໃຫມ່ເຫມືອນກັນສັນນັ້ນ ເພາະວ່າຖ້າເຮົາທັງຫລາຍເຂົ້າຕິດສນິດກັບພຣະອົງແລ້ວໃນການຕາຍຢ່າງພຣະອົງ ເຮົາກໍຈະເຂົ້າສນິດກັບພຣະອົງໃນການຖືກຊົງບັນດານໃຫ້ເປັນຄືນມາ ຢ່າງພຣະອົງໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ.

ໂຣມ ໔:໒໕

ຄືພຣະເຢຊູຜູ້ຊົງຖືກມອບໄວ້ໃຫ້ເຖິງສິ້ນພຣະຊົນແລ້ວ ເພາະການເຮັດຜິດຂອງເຮົາທັງຫລາຍ ແລະໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ ເພື່ອໃຫ້ເຮົາໄດ້ຊົງຖືວ່າເປັນຄົນຊອບທັມ.

# ຄວາມບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ

ເຮັບເຣີ ໑໓:໑໒

ພຣະເຢຊູກໍໄດ້ຊົງທົນທຸກທໍຣະມານນອກປະຕູເມືອງ ເພື່ອຊໍາຣະພົລເມືອງໃຫ້ບໍຣິສຸດດ້ວຍພຣະໂລຫິດຂອງພຣະອົງເອງ.

໑ ໂຢຮັນ ໑:໙

ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມຈະຊົງໂຜດຍົກໂທດບາບຂອງພວກເຮົາ ແລະຊົງໂຜດຊໍາຣະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ.

໒ ໂກຣິນໂທ ໗:໑

ພວກທີ່ຮັກເອີຍ, ເມື່ອພວກເຮົາມີພຣະສັນຍາດັ່ງນັ້ນແລ້ວ ໃຫ້ເຮົາທັງຫລາຍຊໍາຣະຕົວຈາກຮອຍເປື້ອນທຸກຢ່າງ ຂອງເນື້ອກາຍແລະວິນຍານຈິດ ແລະຈົ່ງເຮັດໃຫ້ມີຄວາມບໍຣິສຸດຢ່າງຄົບຖ້ວນໂດຍຄວາມຢໍາເກງພຣະເຈົ້າ.

ເອເຟໂຊ ໑:໔

ໃນພຣະຄຣິດນັ້ນ ພຣະອົງໄດ້ຊົງເລືອກພວກເຮົາໄວ້ຕັ້ງແຕ່ກ່ອນທີ່ຈະຊົງວາງຮາກສ້າງໂລກ ເພື່ອເຮົາທັງຫລາຍຈະບໍຣິສຸດໂດຍບໍ່ມີຂໍ້ຕິຕຽນໄດ້ຕໍ່ພຣະພັກພຣະອົງ.

# ຄວາມບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ (ຕໍ່)

ລູກາ ໑:໗໔-໗໕

ເມື່ອເຮົາໄດ້ພົ້ນຈາກມືສັດຕູທັງຫລາຍຂອງເຮົາແລ້ວ ຈະຊົງໂຜດໃຫ້ເຮົາໄດ້ບົວຣະບັດພຣະອົງໂດຍປາສຈາກຄວາມຢ້ານ ດ້ວຍໃຈສັດຊື່ແລະດ້ວຍຄວາມຊອບທັມຕໍ່ພຣະພັກພຣະອົງຕລອດຊີວິດຂອງພວກເຮົາ.

ເອຊາຢາ ໓໕:໘

ຢູ່ທີ່ນັ້ນຈະມີທາງຫລວງ ທາງນັ້ນຊື່ວ່າ"ບໍຣິສຸດ" ຄົນບາບກັບຄົນໂງ່ຈະເດີນທາງນັ້ນບໍ່ໄດ້.

ມັດທາຍ ໓:໑໑

ຝ່າຍເຮົາ ເຮົາໃຫ້ພວກເຈົ້າຮັບບັບຕິສະມາດ້ວຍນ້ຳ ໝາຍເຖິງການຖິ້ມໃຈເກົ່າເອົາໃຈໃໝ່ກໍແມ່ນ ແຕ່ຜູ້ທີ່ຈະມາພາຍຫລັງເຮົາກໍມີຣິດກວ່າເຮົາອີກ ເຊິ່ງເຮົາບໍ່ສົມຄວນຈະຈັບເກີບຂອງເພິ່ນໄປ ຝ່າຍຜູ້ນັ້ນຈະໃຫ້ພວກເຈົ້າຮັບບັບຕິສະມາດ້ວຍ ພຣະວິນຍານບໍຣິສຸດແລະດ້ວຍໄຟ.

# ການເຕັມໄປດ້ວຍພຣະວິນຍານບໍຣິສຸດ

ລູກາ ໑໑:໑໓

ຖ້າທ່ານທັງຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາຜູ້ຊົງສະຖິດຢູ່ໃນສວັນຈະຊົງປະທານພຣະວິນຍານບໍຣິສຸດແກ່ຜູ້ທີ່ຂໍຈາກພຣະອົງ.

ກິຈການ ໔:໓໑

ເມື່ອເຂົາອ້ອນວອນຈົບລົງແລ້ວ ບ່ອນທີ່ເຂົາປະຊຸມກັນນັ້ນກໍສະທ້ານຫວັ່ນໄຫວ ແລະຄົນເຫລົ່ານັ້ນໄດ້ເຕັມໄປດ້ວຍພຣະວິນຍານບໍຣິສຸດທຸກຄົນ ຈຶ່ງພາກັນກ່າວພຣະທັມຂອງພຣະເຈົ້າດ້ວຍໃຈກ້າຫານ.

ກິຈການ ໑:໘

ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພະຍານຝ່າຍເຮົາ.

ໂຣມ ໘:໙

ອັນນຶ່ງ ຖ້າແມ່ນພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫລາຍຢ່າງແທ້ຈິງແລ້ວ ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດແຕ່ຢູ່ຝ່າຍພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະຄຣິດ ຜູ້ນັ້ນກໍບໍ່ເປັນຂອງພຣະອົງ.

# ພຣະສັນຍາອັນອັດສະຈັນຕໍ່ຄຣິສຕຽນ

ພຣະນິມິດ ໒໑:໔

ພຣະເຈົ້າຈະຊົງເຊັດນໍ້າຕາທຸກໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ.

໑ ເປໂຕ ໔:໑໒,໑໓

ພວກທີ່ຮັກເອີຍ, ຢ່າປລາດໃຈທີ່ພວກທ່ານໄດ້ຮັບຄວາມທຸກຮ້ອນຢ່າງແສນສາຫັດເປັນການລອງໃຈ ເຫມືອນກັບວ່າເປັນເຫດອັນແປກປລາດເກີດຂຶ້ນກັບພວກທ່ານ ແຕ່ທ່ານທັງຫລາຍຈົ່ງຊົມຊື່ນຍິນດີທີ່ໄດ້ມີສ່ວນຮ່ວມໃນຄວາມທຸກທໍຣະມານຂອງພຣະຄຣິດ ເພື່ອວ່າເມື່ອສະງ່າຣາສີຂອງພຣະອົງພາກົດຂຶ້ນ ພວກທ່ານກໍຈະໄດ້ຊົມຊື່ນຍິນດີຢ່າງຫລວງຫລາຍເຫມືອນກັນ.

ເພງສັນລະເສີນ ໓໔:໑໘

ພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃກ້ຜູ້ທີ່ຂາດຄວາມກ້າຫານ ແລະພຣະອົງຊົງຊ່ອຍຜູ້ທີ່ສູນເສັຽຄວາມຫວັງທຸກຢ່າງ.

# ພຣະສັນຍາເມື່ອຖືກທົດລອງ

ເພງສັນລະເສີນ ໓໔:໑໙

ຄົນດີທົນທຸກທໍຣະມານຕໍ່ຄວາມທຸກຍາກລຳບາກຢ່າງຫລວງຫລາຍ ແຕ່ພຣະຜູ້ເປັນເຈົ້າຊົງ**ໂຜດ**ລາວໃຫ້ພົ້ນຈາກສິງເຫລົ່ານີ້.

ໂຣມ ໑໖:໒໐

ຍັງບໍ່ຊ້າບໍ່ນານ ພຣະເຈົ້າຜູ້ຊົງໂຜດປະທານສັນຕິສຸກຈະຊົງປາບຊາຕານໃຫ້ຫມຸ່ນລົງໃຕ້ພື້ນຕີນຂອງເຈົ້າທັງຫລາຍ ຂໍໃຫ້ພຣະຄຸນຂອງພຣະເຢຊູເຈົ້າຂອງເຮົາທັງຫລາຍ ຈົ່ງສະຖິດຢູ່ກັບພວກເຈົ້າເທີ້ນ.

໑ ໂກຣິນໂທ ໑໐:໑໓

ບໍ່ມີການທົດລອງອັນໃດເກີດຂຶ້ນກັບເຈົ້າທັງຫລາຍ ນອກຈາກການທົດລອງທີ່ເຄີຍເກີດກັບມະນຸດທົ່ວໄປ ພຣະເຈົ້າຊົງທ່ຽງທັມ ພຣະອົງຈະບໍ່ຊົງຍອມໃຫ້ພວກເຈົ້າຖືກທົດລອງເກີນກວ່າທີ່ເຈົ້າຈະທົນໄດ້ ແລະເມື່ອຊົງທົດລອງເຈົ້ານັ້ນ ພຣະອົງຈະຊົງໂຜດໃຫ້ເຈົ້າມີທາງຫລີກຫນີໄປໄດ້ດ້ວຍ ເພື່ອເຈົ້າທັງຫລາຍຈະສາມາດທົນໄດ້.

ໂຣມ ໘:໒໘

ພວກເຮົາຮູ້ແລ້ວວ່າ ພຣະເຈົ້າຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງທີ່ພຣະອົງໄດ້ຊົງເອີ້ນໄວ້ຕາມພຣະປະສົງຂອງພຣະອົງ.

# ພຣະສັນຍາຕໍ່ຜູ້ຊະນະ

ພຣະນິມິດ ໓:໑໒

ຜູ້ທີ່ມີຊັຍຊະນະ ເຮົາຈະໃຫ້ຜູ້ນັ້ນເປັນເສົາໃນພຣະວິຫານພຣະເຈົ້າຂອງເຮົາ ແລະຜູ້ນັ້ນຈະບໍ່ອອກໄປນອກພຣະວິຫານຈັກເທື່ອ ເຮົາຈະຈາຣຶກພຣະນາມແຫ່ງພຣະເຈົ້າຂອງເຮົາໃສ່ຕົວຜູ້ນັ້ນ ກັບທັງຊື່ມະຫານະຄອນແຫ່ງພຣະເຈົ້າຂອງເຮົາ ຄືກຸງເຢຣູຊາເລັມໃຫມ່ ເຊິ່ງລົງມາແຕ່ສວັນຈາກພຣະເຈົ້າຂອງເຮົາ ແລະເຮົາຈະຈາຣຶກນາມໃຫມ່ຂອງເຮົາໃສ່ຜູ້ນັ້ນເຫມືອນກັນ.

ພຣະນິມິດ ໓:໕

ຜູ້ທີ່ມີຊັຍຊະນະ ຜູ້ນັ້ນຈະຫົ່ມເຄື່ອງຂາວ ແລະເຮົາຈະບໍ່ລຶບຊື່ຂອງຜູ້ນັ້ນອອກເສັຽຈາກທະບຽນແຫ່ງຊີວິດຈັກເທື່ອ ແຕ່ເຮົາຈະຮັບຮອງຊື່ຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາ ແລະຕໍ່ຫນ້າຝູງເທວະດາຂອງພຣະອົງ.

ພຣະນິມິດ ໒:໗

ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວ ແກ່ຄຣິສຕະຈັກທັງຫລາຍ ຜູ້ໃດມີຊັຍຊະນະ ເຮົາຈະໃຫ້ຜູ້ນັ້ນກິນຜົນຈາກຕົ້ນໄມ້ສຳລັບຊີວິດ ເຊິ່ງຢູ່ໃນເທພອຸທຍານຂອງພຣະເຈົ້າ.

# ພຣະເຈົ້າຊົງກ່າວແກ່ເຮົາເຖິງເຣື່ອງ ການຢ່າຮ້າງ

ລູກາ ໑໖:໑໘

ທຸກຄົນທີ່ຢ່າຮ້າງເມັຽຂອງຕົນແລ້ວໄປເອົາເມັຽໃຫມ່ ກໍຜິດຖານຫລິ້ນຊູ້ ແລະທຸກຄົນທີ່ເອົາຍິງແມ່ຮ້າງມາເປັນເມັຽ ກໍຜິດຖານຫລິ້ນຊູ້ເຫມືອນກັນ.

ມັດທາຍ ໕:໓໒

ຝ່າຍເຮົາ ເຮົາບອກທ່ານທັງຫລາຍວ່າ ຖ້າຜູ້ໃດຈະປະເມັຽຂອງຕົນເພາະເຫດອື່ນ ນອກຈາກການຜິດກັບຊາຍອື່ນ ກໍທີ່ກັບວ່າຜູ້ນັ້ນເຮັດໃຫ້ຍິງນັ້ນຖືກຜິດໃນຖານຫລິ້ນຊູ້ ແລະຖ້າຜູ້ໃດຈະຮັບຍິງເຊິງປະຮ້າງຢ່າງນັ້ນມາເປັນເມັຽ ຜູ້ນັ້ນກໍຖືກຜິດໃນຖານຫລິ້ນຊູ້ເຫມືອນກັນ.

໑ ໂກຣິນໂທ ໗:໑໐,໑໑

ສ່ວນຄົນທີ່ແຕ່ງງານແລ້ວ ເຮົາຂໍສັ່ງ ບໍ່ໃຊ່ເຮົາສັ່ງເອງ ແຕ່ອົງພຣະຜູ້ເປັນເຈົ້າຊົງບັນຊາວ່າ ຢ່າໃຫ້ປະເມັຽປະຜົວ ແຕ່ຖ້ານາງຫາກປະຜົວໄປ ຢ່າໃຫ້ນາງເອົາຜົວໃຫມ່ ຫລືບໍ່ດັ່ງນັ້ນກໍໃຫ້ນາງກັບມາຄືນດີກັບຜົວອີກ ແລະຢ່າໃຫ້ຜົວປະຮ້າງເມັຽ.

# ການສະເດັດມາຄັ້ງທີສອງ
# ຂອງພຣະຄຣິດ

ໂຢຮັນ ໑໔:໓

ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກ ຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດ ພວກທ່ານຈະຢູ່ທີ່ນັ້ນເຫມືອນກັນ.

ລູກາ ໑໒:໔໐

ທ່ານທັງຫລາຍກໍເຫມືອນກັນ ຈົ່ງຕຽມຕົວໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່ຄຶດບໍ່ຝັນນັ້ນ ບຸດມະນຸດຈະສະເດັດມາ.

ຢາໂກໂບ ໕:໘

ພວກເຈົ້າກໍຈົ່ງອົດທົນຢ່າງນັ້ນເຫມືອນກັນ ຈົ່ງຕັ້ງອົກຕັ້ງໃຈໃຫ້ດີ ເພາະໃກ້ຈະເຖິງເວລາທີ່ອົງພຣະຜູ້ເປັນເຈົ້າ ຈະສະເດັດມາແລ້ວ.

ມັດທາຍ ໒໔:໓໐

ເມື່ອນັ້ນ ຫມາຍສຳຄັນຂອງບຸດມະນຸດຈະພາກົດຂຶ້ນໃນທ້ອງຟ້າ ມະນຸດທຸກຊາດທົ່ວໂລກຈະຕີອົກຮ້ອງໄຫ້ ແລ້ວຈະເຫັນບຸດມະນຸດກຳລັງສະເດັດມາເທິງເມກໃນທ້ອງຟ້າ.

# ການສະເດັດມາຄັ້ງທີສອງ
# ຂອງພຣະຄຣິດ (ຕໍ່)

ພຣະນິມິດ ໑໖:໑໕

ເບິ່ງແມ ເຮົາຈະມາເຫມືອນຂະໂມຍ ຄວາມສຸກຈະມີແກ່ຜູ້ທີ່ເຝົ້າລະວັງ ແລະແກ່ຜູ້ທີ່ຮັກສາເສື້ອຜ້າຂອງຕົນບໍ່ໃຫ້ຕົວເປືອຍກາຍ ຢ້ານວ່າຄົນທັງຫລາຍຈະເຫັນຄວາມລະອາຍຂອງຕົນ.

ມັດທາຍ ໑໖:໒໗

ບຸດມະນຸດຈະມາດ້ວຍສະງ່າຣາສີແຫ່ງພຣະບິດາຂອງຕົນ ແລະພ້ອມດ້ວຍພວກເທວະດາຂອງພຣະອົງ ເມື່ອນັ້ນພຣະອົງຈະຊົງປະທານບໍາເຫນັດໃຫ້ແກ່ທຸກຄົນຕາມການທີ່ເຂົາເຮັດນັ້ນ.

ກິຈການ ໑:໑໑

ສອງຄົນນັ້ນຈຶ່ງກ່າວວ່າ ຊາວຄາລີເລເອີຍ ເປັນຫຍັງພວກທ່ານຈຶ່ງຢືນເບິ່ງທ້ອງຟ້າ ພຣະເຢຊູອົງນີ້ຊົງຮັບໄປຈາກພວກທ່ານຂຶ້ນເມືອສວັນແລ້ວ ຈະສະເດັດມາອີກເຫມືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສວັນນັ້ນ.

# ພຣະຄັມຂອງພຣະເຈົ້າ

໒ ຕີໂມທຽວ ໓:໑໖

ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສັ່ງສອນ ການກ່າວຕັກເຕືອນວ່າກ່າວ ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຮົມໃນທາງຊອບທັມ.

໒ ເປໂຕ ໑:໒໑

ຄຳທຳນວາຍນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າ ຕາມທີ່ພຣະວິນຍານບໍຣິສຸດຊົງດົນໃຈ.

ເພງສັນລະເສີນ ໑໑໙:໑໐໕

ພຣະທັມຂອງພຣະອົງເປັນເຫມືອນຕະກຽງສ່ອງແສງນຳໜ້າຂ້ານ້ອຍ ແລະເປັນແຈ້ງເຍືອງທີນທາງໃຫ້ຂ້ານ້ອຍ.

ມັດທາຍ ໒໒:໒໙

ພຣະເຢຊູຊົງຕອບເຂົາວ່າ "ພວກທ່ານຫລົງຜິດແລ້ວ ເພາະບໍ່ຮູ້ຈັກພຣະຄັມພີຫລືຣິດເດດຂອງພຣະເຈົ້າ."

Published in numerous languages by World Missionary Press as God supplies funds in answer to prayer. If you would like more copies for careful distribution, write in English to:

**World Missionary Press, Inc.**
**P.O. Box 120**
**New Paris, IN 46553-0120 USA**

ຮຽບຮຽງໂດຍ ວັຕສັນ ກູດແມນ

ປຶ້ມນີ້ແຈກໃຫ້ລ້າໆ

www.wmpress.org 7-15 45/2 Lao HFA